ການ ມອບ-ຮັບ ຊ່ວງແລວທາງ ຂອງໂຄງການທາງດ່ວນ ວຽງຈັນ-ປາກເຊ

ໃຫ້ແກ່ ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃນວັນທີ 29 ມັງກອນ 2018 ທີ່ຫ້ອງປະຊຸມຂອງກະຊວງແຜນການ ແລະ ການລົງທຶນ, ຕ່າງໜ້າໃຫ້ແກ່ລັດຖະບານ ສປປ ລາວໄດ້ມອບ-ຮັບ ຂໍ້ຕົກລົງຂອງລັດຖະມົນຕີ ສຳລັບຊ່ວງແລວທາງ ໃຫ້ 4 ບໍລິສັດ ທີ່ຜ່ານການປະມູນ ແລະ ຄັດເລືອກ **ໃນນັ້ນລວມມີ ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ** ເພື່ອດຳເນີນ ການສຳຫຼວດ ແລະ ສ້າງບົດວິພາກເສດຖະກິດເຕັກນິກ ຕໍ່ໂຄງການທາງດ່ວນວຽງຈັນ-ປາກເຊ.





ໃນວາລະອັນໃກ້ນີ້ ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ ຈະສູ້ຊົນເອົາໃຈໃສ່ແຜນການຈັດຕັ້ງ ປະຕິບັດວຽກງານບຸລິມະສິດ ໃນຕໍ່ໜ້າ ດັ່ງນີ້:

1). ປະສານງານ-ສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອດຳເນີນລົງນາມ ບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ຕ່າງໜ້າລັດຖະບານ ແລະ ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາມະຫາຊົນ;

2). ເລີ່ມຕົ້ນດຳເນີນການສຳຫຼວດທາງດ້ານເຕັກນິກ ໃນຊ້ວງແລວທາງ ທີ່ບໍລິສັດຮັບຜິດຊອບ;

3). ຫຼັງຈາກຜົນສຳເລັດຜົນການສຳຫຼວດ ແລະ ບໍລິສັດຈະຍື່ນບົດວິພາກເສດຖະກິດເຕັກນິກ ໃຫ້ລັດຖະບານ ເພື່ອຢັ້ງຢືນ ແລະ ສືບຕໍ່ຮ່າງເຊັນສັນຍາກັບລັດຖະບານ.

ບໍລິສັດພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຜູ້ນຳທາງດ້ານການກໍ່ສ້າງພື້ນຖານໂຄງລ່າງ ໃນ ສປປລາວ ມີຄວາມຍິນດີຕໍ່ພະລາໜ້າທີ່ໆຖືກມອບໝາຍຈາກລັດຖະບານແຫ່ງ ສປປ ລາວ ແລະ ຈະປະຕິບັດໜ້າທີ່ຢ່າງສຸດ ຄວາມສາມາດ.